ສຳນັກງານ ຄຄຊ
ສົ່ງ ລົງ
ເລກທີ 758
ວັນທີ 14 JUL 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 25 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 13 ກໍລະກົດ 2017

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 26-30/06/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 2,09% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສະຫະລັດອາເມລິກາອອກມາບໍ່ດີ ເປັນຕົ້ນຍອດການສັ່ງຊື້ສິນຄ້າຄົງທົນຫຼຸດລົງ 1,10% ຂອງເດືອນ 5/2017 ຈາກຫຼຸດລົງ 0,90% ໃນເດືອນຜ່ານມາ ແລະ ບວກກັບຕົວເລກການຂໍສະຫວັດດີການການວ່າງງານຂອງສະຫະລັດອາເມລິກາອອກ ເພີ່ມຂຶ້ນເປັນ 244.000 ຄົນ ໃນອາທິດນີ້ ຈາກ 242.000 ຄົນ ໃນອາທິດຜ່ານມາ[1].

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 19-23/06/2017 | ອາທິດນີ້ 26-30/06/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1170 | 1,1409 | -2,09% |
| ເຢນ/ໂດລາ | 111,19 | 111,96 | -0,69% |
| ບາດ/ໂດລາ | 33,94 | 33,95 | -0,03% |
| ເປໂຊ/ໂດລາ | 50,19 | 50,44 | -0,51% |
| ຣູເປຍ/ໂດລາ | 13.325 | 13.325 | 0,00% |
| ໂດລາສິງກະໂປ/ໂດລາ | 1,3865 | 1,3760 | 0,76% |
| ຢວນ/ໂດລາ | 6,8383 | 6,7779 | 0,89% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 5,64% ຈາກ 43,81 ໂດລາ/ບາເຣວ ມາເປັນ 46,28 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳ

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

ມັນແອັດຊັງຂອງ ສະຫະລັດອາເມລິກາ ຫຼຸດລົງ 0,89 ລ້ານບາເຣວ ຂອງອາທິດທີ 23/06/2017 ຈາກຫຼຸດລົງ 0,58 ລ້ານບາເຣວໃນອາທິດຜ່ານມາ[2].ນອກຈາກນັ້ນ, ສຳນັກງານດ້ານພະລັງງານຂອງ ສະຫະລັດອາເມລິກາ (EIA) ໄດ້ປະກາດວ່າ ປະລິມານການຜະລິດນ້ຳມັນດິບຂອງ ສະຫະລັດອາເມລິກາ ໃນອາທິດຜ່ານມາ ຫຼຸດລົງປະມານ 0,10 ລ້ານບາເຣວ/ວັນ ເປັນ 9,30 ລ້ານບາເຣວ/ວັນ[3];

- ສຳລັບລາຄາຄຳຫຼຸດລົງ 1,09% ຈາກ 1.256,90 ໂດລາ/ອອນ ມາເປັນ 1.243,21 ໂດລາ/ອອນ ເນື່ອງຈາກອັດຕາຜົນຕອບແທນພັນທະບັດຂອງ ສ.ອາເມລິກາ ແລະ ເອີຣົບ ປັບເພີ່ມຂຶ້ນ ເຮັດໃຫ້ນັກລົງທຶນມີຄວາມຕ້ອງການໃນການຖືຄອງຄຳຫຼຸດລົງ[4].

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,07% ແຕ່ອ່ອນຄ່າລົງ 0,01% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 2,58% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 8,00% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 19-23/06/2017 | | | ອາທິດນີ້ 26-30/06/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[5] | | | | | | | | | | | | |
| ໂດລາ | 8.393,38 | 8.414,31 | 8.399,72 | 8.385,62 | 8.407,54 | 8.393,86 | 0,09% | 0,08% | 0,07% | -2,79% | -2,38% | -2,58% |
| ບາດ | 247,98 | 248,74 | 248,47 | 248,16 | 248,75 | 248,48 | -0,07% | -0,005% | -0,01% | -8,26% | -7,95% | -8,00% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,33% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 27,94%;
- ປະລິມານເງິນ M2 ຫຼຸດລົງ 0,51% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 18,18%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (23-29/06/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 8,66 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 66,50 ລ້ານໂດລາ ແລະ ຂາຍໂດລາໄດ້ 57,84 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.534,46 ລ້ານບາດ (ໃນນີ້ ຊື້ບາດໄດ້ 285,22 ລ້ານບາດ ແລະ ຂາຍບາດໄດ້ 1.819,68 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນໂດລາເພີ່ມຂຶ້ນ 47,36% ແຕ່ ເງິນບາດຫຼຸດລົງ 1,75%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 56,30 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 228 ລ້ານບາດ;

---

[2] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

[3] ແຫຼ່ງທີ່ມາຂອງຂໍ້ມູນ: https://www.thaioilgroup.com

[4] ແຫຼ່ງທີ່ມາຂອງຂໍ້ມູນ: https://www.goldhips.com

[5] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,19 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 39,98 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາສຸດທິ ຈຳນວນ 0,05 ລ້ານໂດລາ ແຕ່ເງິນບາດບໍ່ມີການເຄື່ອນໄຫວ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 16-22/06/2017 | | ອາທິດທີ 23-29/06/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **57,02** | **403,83** | **66,50** | **285,22** | **16,63%** | **-29,37%** |
| - ທ/ຄທຸລະກິດລັດ | 15,85 | 83,43 | 7,43 | 37,70 | -53,12% | -54,81% |
| - ທ/ຄທຸລະກິດອື່ນໆ | 41,17 | 320,40 | 59,07 | 247,52 | 43,48% | -22,75% |
| **2. ການຂາຍເງິນຕາຕ່າງປະເທດ** | **27,36** | **1.738,60** | **57,84** | **1.819,68** | **111,40%** | **4,66%** |
| - ທ/ຄທຸລະກິດລັດ | 13,80 | 289,91 | 44,91 | 121,20 | 225,43% | -58,19% |
| - ທ/ຄທຸລະກິດອື່ນໆ | 13,56 | 1.448,69 | 12,93 | 1.698,48 | -4,65% | 17,24% |
| **ຊື້-ຂາຍສຸດທິ ທທກ** | **29,66** | **-1.334,77** | **8,66** | **-1.534,46** | **-70,80%** | **14,96%** |
| - ຜິດດ່ຽງ ຊື້-ຂາຍ | 52,02% | -330,53% | 13,02% | -537,99% | -74,96% | 62,77% |
| - ມູນຄ່າການຊື້-ຂາຍ | **84,38** | **2.142,43** | **124,34** | **2.104,90** | **47,36%** | **-1,75%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-3,65** | **-7,00** | **-56,30** | **-228,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,65 | 7,00 | 56,30 | 228,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **4,53** | **127,58** | **1,19** | **39,98** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,05** | **0,00** | **0,05** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,05 | 0,00 | 0,05 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 06/2017 ຄາດວ່າຢູ່ໃນລະດັບ 0,66% ຫຼຸດລົງຈາກ 1,07% ທຽບໃສ່ເດືອນ 05/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ຫຼຸດລົງ 34,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 82,86 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 19,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 149,49 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 879 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 7 ສະບັບ ເທົ່າກັບ 0,80% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 666,33 ຕື້ກີບ ເພີ່ມຂຶ້ນ 232,80 ຕື້ກີບ ເທົ່າກັບ 53,69% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (23-29/06/2017) ມີທັງໝົດ 3.586 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈໍານວນ 3.411 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 263,53 ຕື້ກີບ ຈາກ 1.361,57 ຕື້ກີບ ມາເປັນ 1.098,04 ຕື້ກີບ ເທົ່າກັບ 19,35%;
- ກະຊວງການເງິນ: ມີການເຄື່ອນໄຫວຈໍານວນ 175 ຄັ້ງ, ມູນຄ່າການໂອນໃນອາທິດ ເພີ່ມຂຶ້ນ 32,77 ຕື້ກີບ ຈາກ 178,96 ຕື້ກີບ ມາເປັນ 211,73 ຕື້ກີບ ເທົ່າກັບ 18,31%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.018,56 ຈຸດ ຫຼຸດລົງ 0,22% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 80.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 367,17 ຕື້ກີບ ຫຼຸດລົງ 94,05% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 46,66% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 19-23/06/2017 | ດັດຊະນີອາທິດທີ 26-30/06/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.013,62 | 1.018,56 | -0,22 | |

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)** (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈໍານວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 75.900 | 409.850.000 | 5.400 | 32.800 | 179.860.000 | 5.484 | -56,79 | -56,12 | 84 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 188.900 | 944.605.000 | 5.001 | 36.100 | 160.160.000 | 4.437 | -80,89 | -83,04 | -564 |
| ບໍລິສັດລາວເວີນ ມະຫາຊົນ | 637.700 | 4.814.635.000 | 7.100 | - | - | 7.550 | -100,00 | -100,00 | 450 |
| ບໍລິສັດປີໂຕລ້ຽມເທລດດິ້ງລາວ ມະຫາຊົນ | 200 | 400.000 | 2.000 | 7.400 | 14.100.000 | 1.905 | 3.600,00 | 3.425,00 | -95 |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | - | - | 3.000 | 4.500 | 13.050.000 | 2.900 | - | - | -100 |
| ທັງໝົດ | 902.700 | 6.169.490.000 | 6.834 | 80.800 | 367.170.000 | 4.544 | -91,05 | -94,05 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການຈັດກອງປະຊຸມ ປຶກສາຫາລືກ່ຽວກັບການສົ່ງເສີມການປູກກາເຟ, ຜະລິດເຂົ້າ ແລະ ການສົ່ງເສີມຟາມໝູ ທີ່ (ຫສນຍ);
- ສືບຕໍ່ຄົ້ນຄວ້າການສະເໜີອອກຈໍາໜ່າຍຮຸ້ນຂອງບໍລິສັດ ລາວອາໂກເທັກ ມະຫາຊົນ ແລະ ບໍລິສັດ ລາວເດີນອາກາດ ມະຫາຊົນ;
- ສືບຕໍ່ກະກຽມຄວາມພ້ອມທຸກດ້ານໃຫ້ແກ່ກອງປະຊຸມບົ່ມດໍາເນີນຊີວິດການເມືອງປົວແປງພັກຂອງ ທຫລ ໃນປີ 2017 ໃຫ້ສໍາເລັດຕາມຄາດໝາຍ;
- ຕ້ອນຮັບການຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ຄະນະຊ່ຽວຊານຈາກກຸ່ມທະນາຄານໂລກ ແລະ ຊ່ຽວຊານຈາກຢູ່ນຽນເພ ຂອງ ສປ ຈີນ.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ຈັດກອງປະຊຸມດໍາເນີນຊີວິດການເມືອງປັບປຸງປົວແປງພາຍໃນພັກຂອງອົງຄະນະພັກ ທະນາຄານແຫ່ງ ສປປ ລາວ;
- ສືບຕໍ່ຕິດຕາມສະພາບການເຄື່ອນໄຫວຂອງບໍລິສັດພີເອັສ;
- ສືບຕໍ່ຄົ້ນຄວ້າການກໍານົດອັດຕາສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນລາຍໃຫຍ່ ໃນບໍລິສັດຈົດທະບຽນ ໃຫ້ຢູ່ໃນລະຫວ່າງ 60-70% ຂອງຈໍານວນຮຸ້ນທັງໝົດ;
- ສືບຕໍ່ຄົ້ນຄວ້າຮ່າງກົດໝາຍວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ;
- ສືບຕໍ່ປຶກສາຫາລືແຜນຍຸດທະສາດໃນການພັດທະນາລະບົບ IT ກັບ ທະນາຄານໂລກ;
- ກະກຽມກອງປະຊຸມການປະເມີນຄວາມສ່ຽງລະດັບຊາດກັບວຽກງານ AML/CFT;
- ປຶກສາຫາລືກ່ຽວກັບລັດຖະບັນຍັດວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ;
- ກະກຽມຕ້ອນຮັບການຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ຄະນະຜູ້ບໍລິຫານຂອງບໍລິສັດໂອຣາເຄິ (Oracle).

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ